# ຄຳແນະນຳ



## ວິທີການລົງຄະແນນສຽງໂດຍໃຊ້ບັດລົງຄະແນນສຽງຊະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ ສຳລັບຜູ້ລົງຄະແນນທີ່ຈົດທະບຽນແລ້ວ

**ທ່ານຈະຕ້ອງມີ:**

- ບັດລົງຄະແນນ*
- ຊອງຈົດໝາຍໃສ່ບັດລົງຄະແນນສຽງສີແຫບ*
- ຊອງຈົດໝາຍລາຍເຊັນສີຂາວ*
- ຊອງຈົດໝາຍສົ່ງກັບຄືນສີຂາວຂະໜາດໃຫຍ່ກວ່າ*

*ຖ້າທ່ານບໍ່ມີສິ່ງເຫຼົ່ານີ້, ກະລຸນາຕິດຕໍ່ພະນັກງານການເລືອກຕັ້ງທ້ອງຖິ່ນຂອງທ່ານ

- ບິກສີດຳ
- ເລກປະຈຳຕົວຂອງທ່ານ
  ເລກໃບຂັບຂີ່ຂອງລັດມິນນີໂຊຕາ, ເລກບັດປະຈຳຕົວຂອງລັດມິນນີໂຊຕາ, ຫຼືເລກສີ່ໂຕສຸດທ້າຍຂອງບັດປະກັນສັງຄົມ
  *ເບິ່ງຂ້າງລຸ່ມນີ້ຖ້າຫາກວ່າທ່ານບໍ່ມີເລກໃດໆດັ່ງກ່າວ*
- ພະຍານ
  ຜູ້ໃດກໍໄດ້ທີ່ຈົດທະບຽນລົງຄະແນນສຽງໃນລັດ ມິນນີໂຊຕາ,
  *ລວມທັງຄູ່ສົມລົດຫຼືຍາດພີ່ນ້ອງ ຂອງທ່ານ,*
  ຫຼືໂນທາຣີ ພັບລິກ,
  ຫຼືບຸກຄົນທີ່ມີອຳນາດໃນການຮັບຄຳສາບານ




### ❶ ລົງຄະແນນ!

- ສະແດງບັດລົງຄະແນນວ່າງເປົ່າໃຫ້ພະຍານ ຂອງທ່ານເບິ່ງ ແລ້ວເຮັດເຄື່ອງໝາຍລົງຄະແນນສຽງຂອງທ່ານໃນທີ່ສ່ວນຕົວ
- ປະຕິບັດຕາມຄຳແນະນຳທີ່ຂຽນຢູ່ໃນບັດລົງຄະແນນ
- ຢ່າຂຽນຊື່ຫຼືໝາຍເລກປະຈຳຕົວ ຂອງທ່ານໃນບັດລົງຄະແນນ
- ຢ່າລົງຄະແນນສຽງໃຫ້ຜູ້ສະໝັກເກີນກວ່າອະນຸຍາດ *ຖ້າທ່ານເຮັດດັ່ງນັ້ນ, ຄະແນນສຽງ ຂອງທ່ານຈະບໍ່ຖືກນັບ*
  ***ເບິ່ງອີກດ້ານໜຶ່ງຖ້າຫາກວ່າທ່ານເຮັດຜິດພາດໃນບັດລົງຄະແນນຂອງທ່ານ***




### ❷ ໃສ່ບັດລົງຄະແນນຂອງທ່ານໃນຊອງຈົດໝາຍສີແຫບແລ້ວປິດຊອງ

- ບໍ່ຕ້ອງຂຽນຫຍັງໃສ່ຊອງນີ້

### ❸ ເອົາຊອງຈົດໝາຍສີແຫບໃສ່ໃນຊອງຈົດໝາຍລາຍເຊັນສີຂາວ




### ❹ ກອກຂໍ້ມູນໃນຊອງຈົດໝາຍລາຍເຊັນສີຂາວ<u>ຢ່າງສົມບູນ</u>

- ຖ້າວ່າບໍ່ມີປ້າຍໜ້າຊອງ ໃຫ້ຂຽນຊື່ແລະທີ່ຢູ່ໃນລັດມິນນີໂຊຕາຂອງທ່ານໃສ່
- ຂຽນໝາຍເລກໃບຂັບຂີ່ຂອງລັດມິນນີໂຊຕາຂອງທ່ານ, ເລກບັດປະຈຳຕົວຂອງລັດມິນນີໂຊຕາ, ຫຼືເລກສີ່ໂຕສຸດທ້າຍຂອງບັດປະກັນສັງຄົມຂອງທ່ານ
  **ໃຫ້ແນ່ໃຈວ່າໃຊ້ເລກດຽວກັນກັບເລກທີ່ທ່ານໃຫ້ໄວ້ໃນຄຳຮ້ອງສະໝັກລົງຄະແນນສຽງຊະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້**
  *ຖ້າວ່າທ່ານບໍ່ມີເລກໃດໆດັ່ງກ່າວ, ໃຫ້ເຮັດເຄື່ອງໝາຍໃນຫ້ອງນັ້ນ*
- ອ່ານແລະເຊັນສາບານ
- ຂໍໃຫ້ພະຍານຂອງທ່ານຂຽນຊື່ຂອງເຂົາເຈົ້າແລະທີ່ຢູ່<u>ຖະໜົນ</u>ໃນລັດມິນນີໂຊຕາລວມທັງເມືອງໃສ່ (ບໍ່ແມ່ນຕູ້ໄປສະນີ),ແລ້ວເຊັນຊື່ຂອງເຂົາເຈົ້າ
  *ຖ້າຫາກວ່າພະຍານຂອງທ່ານເປັນ ພະນັກງານຫຼືໂນທາຣີ ພັບລິກ ແທນທີ່ຈະ ຂຽນທີ່ຢູ່ ເຂົາເຈົ້າຈະຕ້ອງຂຽນຕຳແໜ່ງຂອງເຂົາເຈົ້າໃສ່ ໂນທາຣີຍັງຕ້ອງໄດ້ຈ້ຳກາບັດ ຂອງເຂົາເຈົ້າ.*
- ປິດຊອງຈົດໝາຍ




### ❺ ເອົາຊອງຈົດໝາຍລາຍເຊັນໃສ່ໃນຊອງຈົດໝາຍສົ່ງກັບຄືນສີຂາວຂະໜາດໃຫຍ່ກວ່າເພື່ອປົກປັກຮັກສາຂໍ້ມູນສ່ວນຕົວຂອງທ່ານເພື່ອບໍ່ໃຫ້ຄົນອື່ນສ່ອງເຫັນ

- ປິດຊອງຈົດໝາຍ




### ❻ ສົ່ງບັດລົງຄະແນນສຽງຂອງທ່ານກັບຄືນມາ<u>ທີ່ ທີ່ຢູ່ໃນຊອງຈົດໝາຍກ່ອນວັນເລືອກຕັ້ງ</u> ບັດລົງລົງຄະແນນສຽງອາດຈະບໍ່ໄດ້ຮັບການສົ່ງຕໍ່ໄປສະຖານທີ່ນັບຄະແນນຂອງທ່ານ.

ທ່ານມີສາມທາງເລືອກ:

- ສົ່ງມັນມາຮອດກ່ອນວັນເລືອກຕັ້ງໃຊ້ໄປສະນີສະຫະລັດ ຫຼືບໍລິການຈັດສົ່ງ,
- ນຳສົ່ງດ້ວຍໂຕເອງກ່ອນວັນເລືອກຕັ້ງຫຼືກ່ອນບ່າຍ 3 ໂມງແລງວັນເລືອກຕັ້ງ,ຫຼື
- ຂໍໃຫ້ຜູ້ໃດນຳມາສົ່ງກ່ອນບ່າຍ 3 ໂມງແລງວັນເລືອກຕັ້ງ
  *ບຸກຄົນຜູ້ນີ້ບໍ່ສາມາດນຳບັດລົງມາສົ່ງໃຫ້ຫຼາຍກວ່າ 3 ບັດ*




*ເບິ່ງອີກດ້ານໜຶ່ງສຳລັບຄຳແນະນຳພິເສດຫາກວ່າທ່ານມີຄວາມພິການ*

**ກວດສອບສະຖານະພາບບັດລົງຄະແນນສຽງຊະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ຂອງທ່ານໄດ້ທີ່ www.mnvotes.org**

## ການແກ້ໄຂຄວາມຜິດພາດ




- ຖ້າວ່າມີເວລາພໍ ໃຫ້ຂໍບັດລົງຄະແນນສຽງໃໝ່ຈາກພະນັກງານການເລືອກຕັ້ງຂອງທ່ານ ຫຼື
- ຖ້າທ່ານໝາຍຜູ້ສະໝັກຜິດໂດຍບັງເອີນ ໃຫ້ທ່ານຂີດຂ້າຊື່ຂອງຜູ້ສະໝັກທີ່ທ່ານເລືອກໄປອອກແລະໃສ່ເຄື່ອງໝາຍລົງຄະແນນສຽງຂອງທ່ານໃຫ້ຜູ້ສະໝັກທີ່ທ່ານຕ້ອງການ (ບໍ່ຕ້ອງຂຽນຊື່ຫຍໍ້ຂອງທ່ານໃສ່)

## ຖ້າທ່ານມີຄວາມພິການ:

ຖ້າວ່າທ່ານມີຄວາມພິການຫຼືບໍ່ສາມາດໝາຍບັດຄະແນນຂອງທ່ານໄດ້ ພະຍານຂອງທ່ານສາມາດຊ່ວຍທ່ານໝາຍບັດລົງຄະແນນສຽງຂອງທ່ານຕາມການບອກຂອງທ່ານ ແລະສາມາດລວບລວມເອກກະສານ, ແລະກອກແບບຟອມໃຫ້ທ່ານໄດ້

ຍາມທີ່ເຊັນຊື່ໃສ່ຊອງຈົດໝາຍ, ກົດໝາຍລັດມິນນີໂຊຕາລະບຸວ່າທ່ານສາມາດຈະ:

- ເຊັນຊື່ໃສ່ຊອງຈົດໝາຍສົ່ງກັບຄືນມາດ້ວຍ ຕົວທ່ານເອງ, ຫຼື
- ເຮັດເຄື່ອງໝາຍ, ຫຼື
- ຂໍໃຫ້ພະຍານຂອງທ່ານເຊັນຊື່ໃຫ້ທ່ານໂດຍຊ້ອງໜ້າຂອງທ່ານ (ໃຫ້ພະຍານຂອງທ່ານເຊັນຊື່ຂອງເຂົາເຈົ້າຄືກັນ)
- ຖ້າຫາກທ່ານໄດ້ໃຊ້ແນວຈໍ້າກາລາຍເຊັນເປັນລາຍເຊັນຂອງທ່ານ ທ່ານສາມາດໃຊ້ແນວຈໍ້າກາລາຍເຊັນຫຼືຮ້ອງຂໍໃຫ້ພະຍານຊ່ວຍໃຊ້ແນວຈໍ້າກາລາຍເຊັນຂອງທ່ານຊ້ອງໜ້າຂອງທ່ານ

ກົດໝາຍມິນນີໂຊຕາພາກທີ 645.44 ພາກຍ່ອຍທີ 14

ກະລຸນາສັງເກດ: ການລົງຄະແນນສຽງແມ່ນບໍ່ໄດ້ລວມໃນໜັງສືມອບອຳນາດຂອງທະນາຍຄວາມ ບຸກຄົນນັ້ນທີ່ມີໜັງສືມອບອຳນາດຂອງທະນາຍຄວາມສາມາດເຊັນຊື່ໃຫ້ທ່ານໄດ້ໂດຍຊ້ອງໜ້າຂອງທ່ານເທົ່ານັ້ນ, ດັ່ງທີ່ໄດ້ກ່າວໄວ້ຢູ່ຂ້າງເທິງນັ້ນ.

**ແຈ້ງການຮັກສາຄວາມລັບ:** ຖ້າຫາກວ່າບັດລົງຄະແນນຂອງທ່ານໄດ້ຍອມຮັບ ຊື່ແລະທີ່ຢູ່ຂອງທ່ານຈະເປັນຂໍ້ມູນສາທາລະນະນັບແຕ່ຍາມໄດ້ຮັບບັດລົງຄະແນນ ໃນເວລາທີ່ນຳໃຊ້ໃນການເລືອກຕັ້ງ, ທາງດ້ານການເມືອງ ຫຼືເພື່ອວັດຖຸປະສົງໃນການບັງຄັບໃຊ້ກົດໝາຍ. ຖ້າບໍ່ດັ່ງນັ້ນ, ຂໍ້ມູນທີ່ທ່ານສະໜອງໃຫ້ໃນຊອງລາຍເຊັນຂອງທ່ານຈະໄດ້ຖືກຈຳກັດເກັບໄວ້ກັບພະນັກງານການເລືອກຕັ້ງຈົນເຖິງ 8 ໂມງແລງຂອງວັນເລືອກຕັ້ງ ຫຼັງຈາກເວລານັ້ນຊອງຈົດໝາຍຂອງທ່ານແລະຂໍ້ມູນທີ່ຢູ່ໃນນັ້ນ ຍົກເວັ້ນໝາຍເລກປະຈຳຕົວຂອງທ່ານ ຈະເປັນຂໍ້ມູນສາທາລະນະ ທ່ານຕ້ອງມີເລກປະຈຳຕົວຂອງທ່ານເພື່ອເປັນການຮັບປະກັນວ່າບັດລົງຄະແນນທີ່ສົ່ງກັບຄືນມານັ້ນ ແມ່ນ ເປັນຂອງ ຜູ້ລົງຄະແນນຜູ້ດຽວກັນກັບຜູ້ສົ່ງກັບຄືນມາ ທ່ານສາມາດປະຕິເສດບໍ່ໃຫ້ໄດ້ ແຕ່ວ່າມັນອາດຈະນຳໄປສູ່ບັດລົງຄະແນນສຽງຊະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ຂອງທ່ານຖືກປະຕິເສດ ແລະຈະປ້ອງກັນບໍ່ໃຫ້ທ່ານສາມາດກວດສອບສະຖານະພາບບັດລົງຄະແນນສຽງຊະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງຂອງທ່ານອອນລາຍໄດ້.